ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1773 /ອຄ.ກຂອ
ນະຄອນຫຼວງວຽງຈັນ, ລົງວັນທີ 30 ຕຸລາ 2017

## ແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ການເຄື່ອນຍ້າຍພາຍໃນ ແລະ ການສົ່ງອອກ ໄມ້ປ່ອງ ແລະ ຖ່ານຂາວ ໄປຕ່າງປະເທດ.

- ອີງຕາມ ຄຳສັ່ງຂອງ ທ່ານ ນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ລາຍການ (ບັນຊີ) ຜະລິດຕະພັນໄມ້ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016;
- ອີງຕາມ ຜົນຂອງການຈັດປະຊຸມປຶກສາຫາລືຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ຄັ້ງວັນທີ 04 ຕຸລາ 2017.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງ ທ່ານ ເພື່ອປະຕິບັດດັ່ງນີ້:**

1. ການສົ່ງອອກ ໄມ້ປ່ອງ ແລະ ຖ່ານຂາວ ໄປຕ່າງປະເທດ ນອກຈາກໂຮງງານປຸງແຕ່ງໄມ້ ແລະ ໂຮງງານຜະລິດຖ່ານຂາວແລ້ວ, ບໍລິສັດນຳເຂົ້າ-ສົ່ງອອກ ທີ່ມີເອກະສານອະນຸຍາດຖືກຕ້ອງຈາກຂະແໜງການກ່ຽວຂ້ອງໃຫ້ດຳເນີນກິດຈະການສົ່ງອອກຜະລິດຕະພັນປ່າໄມ້ ສາມາດຂໍສະເໜີສົ່ງອອກໄດ້, ແຕ່ຕ້ອງໄດ້ເຊັນສັນຍາວ່າຈ້າງການຜະລິດ ຫຼື ສັນຍາຊື້-ຂາຍກັບໂຮງງານປຸງແຕ່ງໄມ້ປ່ອງ, ໂຮງງານຜະລິດຖ່ານຂາວ ທີ່ເຄື່ອນໄຫວ ແລະ ດຳເນີນການຜະລິດຕົວຈິງຢ່າງຖືກຕ້ອງ;
2. ຜະລິດຕະພັນໄມ້ປ່ອງທີ່ຈະສົ່ງອອກຕ່າງປະເທດ ຕ້ອງໄດ້ຜ່ານການປຸງແຕ່ງຈາກໂຮງງານປຸງແຕ່ງໄມ້ປ່ອງຕາມລາຍການ (ບັນຊີ) ຜະລິດຕະພັນໄມ້ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ທີ່ກະຊວງອຸດສາຫະກຳ ແລະ ການຄ້າວາງອອກ;
3. ການເຄື່ອນຍ້າຍຖ່ານຂາວຜະລິດຈາກໄມ້ຕິ້ວ ແລະ ຜະລິດຕະພັນໄມ້ປ່ອງ ຢູ່ພາຍໃນ ແລະ ສົ່ງອອກ ຕ່າງປະເທດ ແມ່ນໃຫ້ປະຕິບັດຕາມ ນິຕິກຳຂອງຂະແໜງການທີ່ກ່ຽວຂ້ອງວາງອອກ;
4. ການເກັບພັນທະຄ່າທຳນຽມ, ຄ່າຊັບພະຍາກອນປ່າໄມ້ ແລະ ພັນທະພາສີອາກອນຕ່າງໆ ຈາກໄມ້ທີ່ຂຸດຄົ້ນມາຜະລິດເປັນຖ່ານຂາວ ແມ່ນໃຫ້ຄິດໄລ່ ແລະ ຈັດເກັບດັ່ງນີ້:
   - ການຄິດໄລ່ຄ່າອັດຕາຊັບພະຍາກອນທຳມະຊາດໃຫ້ປະຕິບັດຕາມຂໍ້ 15 ມາດຕາ 6 ຂອງລັດຖະບັນຍັດ 001/ປປທ;
   - ການຄິດໄລ່ອັດຕາພາສີຂາອອກ ໃຫ້ປະຕິບັດຕາມ ລຳດັບ 33, ມາດຕາ 2 ຂອງລັດຖະບັນຍັດ 002/ປປທ;
   - ການເກັບຄ່າທຳນຽມ ແລະ ຄ່າບໍລິການທາງດ້ານວິຊາການ ໃຫ້ປະຕິບັດຕາມ ລັດຖະບັນຍັດ 003/ປປທ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ລັດຖະມົນຕີ,

ຂ. ເຂັມມະນີ ພົນເສນາ

ບ່ອນສົ່ງ:

- ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
- ທ່ານ ລັດຖະມົນຕີ, ກະຊວງກະສິກຳ ແລະ ປ່າໄມ້
- ບັນດາທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ
- ບັນດາທ່ານ ຮອງລັດຖະມົນຕີ, ກະຊວງອຸດສາຫະກຳ ແລະ ການຄ້າ